# ການພັດທະນາ Sustainable ແບບຍືນຍົງ Development

ປາຖະກະຖາ ຂອງ ພະທຳມະປິດົກ

(ປ.ອ. ປະຍຸດໂຕ)

# ການພັດທະນາແບບຍືນຍົງ

(Sustainable Development)

ປາຖະກະຖາ ຂອງ ພະທຳມະປິດົກ

(ປ.ອ. ປະຍຸດໂຕ)

ຊື່ປຶ້ມ: ການພັດທະນາ ແບບຍືນຍົງ (Sustainable Development)
ປາຖະກະຖາ ຂອງ ພະທຳມະປິດົກ (ປ.ອ. ປະຍຸດໂຕ)

ແປຈາກປຶ້ມ ການພັດທະນາ ທີ່ຍັ້ງຍືນ (Sustainable Development)
ຂອງ ພະທຳມະປິດົກ (ປ.ອ. ປະຍຸດໂຕ)
ສະບັບພາສາໄທ, ໂດຍ ສຳນັກພິມ ມູນນິທິ ໂກມົນຄີມທອງ,
ພິມເທື່ອທີ່ 10, ກຸງເທບ, ISBN 974-7092-09-3

ແປເປັນພາສາລາວ ໂດຍ ດວງເດືອນ ບຸນຍາວົງ
ບັນນາທິການໂດຍ ພະອາຈານ ສີທົນ ໄຊຍະວົງສອນ
ຕີພິມ ແລະຈັດໜ້າ ໂດຍ: ບໍລິສັດ ດອກເກດຈັດພິມ ຈຳກັດ
ທະບຽນອະນຸຍາດເລກທີ: 192/ພຈ 28102008
ພິມທີ່ໂຮງພິມ ມັນທາຕຸລາດ
ຈຳນວນ 1000 ຫົວ

ຈັດພິມໂດຍ
ໂຄງການພຸດທະສາສະໜາ ເພື່ອການພັດທະນາ

ອຸປະຖຳການຈັດພິມໂດຍ
ເສມສິກຂາໄລ (ປະເທດໄທ)

ຫ້ອງການ ຄ.ພ.ພ ຕັ້ງຢູ່ ບ້ານທົ່ງສາງນາງ, ເມືອງຈັນທະບຸລີ
ນະຄອນຫລວງວຽງຈັນ, ໂທ 021 218205.

# ສາລະບານ

1. ຄຳສະເໜີ ໃນການຈັດພິມ

ໂດຍ ພະອາຈານ ຊາລີ ກັນຕະສີໂລ

## ພາກ I
## ທາງຕັນຂອງການພັດທະນາແບບບໍ່ຍືນຍົງ

*- ເມື່ອໂລກ ຕັ້ງແຮກມີການພັດທະນາ*

*- ພັດທະນາແບບໃດ ຈຶ່ງກາຍເປັນການພັດທະນາ ແບບບໍ່ຍືນຍົງ*

*- ປະເທດໄທເຂົ້າສູ່ຍຸກຂອງການພັດທະນາ*

*- ປະເທດຊາດພັດທະນາ ແຕ່ຊີວິດແລະສັງຄົມ ຊ້ຳພັກແຊ່ບັນຫາ*

*- ເມື່ອທຳມະຊາດແວດລ້ອມເປັນບັນຫາ: ການພັດທະນາກໍເຖິງຂັ້ນວິກິດ*

*- ສິ່ງແວດລ້ອມແທ້ຂອງທຳມະຊາດ: ກັບສິ່ງແວດລ້ອມປອມແປງແຫ່ງເຕັກໂນໂລຊີ ຄວາມຂັດແຍ່ງທີ່ບີບມະນຸດໄປສູ່ທາງເລືອກໃໝ່*

ສອງກະແສສູ່ການພັດທະນາແບບໃໝ່:

*- ເອົາຄົນອອກໜ້າ ເອົາທຳມະຊາດເປັນເປົ້າໝາຍ*

*- ຮ່ວມມືກັນ ຫຼື ຕ່າງຄົນຕ່າງເຮັດ*

*- ຄືແນວໃດ ຈຶ່ງເອີ້ນວ່າການພັດທະນາແບບຍືນຍົງ*

*- ຈະຕ້ອງເຮັດຫຍັງເພື່ອໃຫ້ເປັນການ*
*ພັດທະນາແບບຍືນຍົງ*

*- ເຮັດໄປເຮັດມາ ຈະພັດທະນາໄດ້ຜົນ*
*ຄົນຕ້ອງມີຈະລິຍະທຳ*

*- ຖ້າໄດ້ແຕ່ຈະລິຍະທຳແບບປະນີປະນອມ*
*ການພັດທະນາ ກໍຍືນຍົງບໍ່ໄດ້*

ຈະເຮັດການປະຕິວັດອີກ ແຕ່ແລວທາງໄປຍັງຕົບຕັນ

*ກ. ຄວາມຕົບຕັນດ້ານຈະລິຍະທຳ*

*ຂ. ຄວາມຕົບຕັນທາງດ້ານຄວາມຄິດ*

## ພາກ II
## ກົກທາງຂອງການພັດທະນາແບບຍືນຍົງ

*- ຈະເຮັດຢ່າງໃດ ໃນເມື່ອສິ່ງທີ່ພາມາພໍ້ບັນຫາ*
*ກໍແມ່ນສິ່ງທີ່ພາມາສູ່ຄວາມຈະເລີນ*

- ຄວາມສຳນຶກຜິດ ແມ່ນຈຸດເລີ່ມຕົ້ນ
ຂອງທາງອອກຈາກຄວາມຫລົ້ມຈົມ
- ມະນຸດແພ້ ແຕ່ໂລກວອດວາຍ
- ຈະປະຕິວັດໂລກໄດ້ ຕ້ອງປະຕິວັດພາຍໃນ
ເພື່ອສ້າງຖານຄວາມຄິດໃໝ່ຂຶ້ນກ່ອນ
- ຄວາມຫວັງໃນການແກ້ບັນຫາ ຂຶ້ນນຳການ
ພັດທະນາມະນຸດໃຫ້ເປັນອິດສະລະຢ່າງແທ້ຈິງໄດ້
- ທາງໃນເປັນສຸກມີອິດສະລະ ທາງນອກຢູ່ແບບເພິ່ງພາ
ອາໄສຮ່ວມກັບທຳມະຊາດ
- ດັດສົມວິຖີແຫ່ງອາລະຍະທຳໃຫ້ຖືກທາງ
ບົນພື້ນຖານແຫ່ງລະບົບຄວາມສຳພັນ
ກັບທຳມະຊາດທີ່ຖືກຕ້ອງ
- ກະແສການພັດທະນາສອງສາຍມາຈອບກັນ
ເມື່ອການພັດທະນາຄົນ ກ້າວໄປຖືກທາງ

## ວິທີແກ້ບັນຫາໃນເບື້ອງຕົ້ນ ທີ່ເຂົ້າສູ່ແນວທາງ

1) ທ່າທີຕໍ່ທຳມະຊາດ
2) ພຶດຕິກຳທາງເສດຖະກິດ
3) ການປະດິດສ້າງໃຊ້ວິທະຍາສາດແລະເຕັກໂນໂລຊີ

## ບາດກ້າວໜຶ່ງ ທີ່ຈະເຂົ້າສູ່ລະບົບການພັດທະນາ

*ກ. ພຶດຕິກຳລ້ຳເລີຍລະດັບບຸກຄົນ- ວາສະໜາ*

*ຂ. ພຶດຕິກຳລ້ຳເລີຍລະດັບສັງຄົມ-ວັດທະນະທຳ*

*ຄ. ແນວທາງແກ້ບັນຫາດ້ວຍຄວາມເຫັນແກ່ໂຕ*

## ຕາເຫັນເຫວໃຫຍ່ທາງໜ້າ
## ແຕ່ໃຈຄຶດບິນສູ່ແດນສະຫວັນ

*1) ແນວຄຶດຂັ້ນຮາກຖານ ກັບແນວຄຶດຂັ້ນປະຕິບັດ ບໍ່ສອດຄ່ອງກັນ*

*2) ຄວາມສັບສົນຂ້ອງຄາໃນການເຂົ້າເຖິງ ຄວາມຈິງຂອງທຳມະຊາດ*

*3) ຄວາມບໍ່ຈະແຈ້ງຂອງການພັດທະນາ ໂດຍເອົາຄົນເປັນໃຈກາງ*

*4) ການພັດທະນາແບບກ້ອນເອກະພາບ ທີ່ສົມດຸນທຸ່ນທ່ຽງ ຈະເອົາຫຍັງມາບູລະນາການ (ປະສົມຕື່ມເຕີມກັນ)*

*5) ໂລກກວ້າງໃຫຍ່ໄຮ້ຊາຍແດນ ແຕ່ຄົນຍິ່ງຄັບແຄບ ແລະແບ່ງແຍກ*

# ພັດທະນາຄົນຂຶ້ນມາເປັນແກນບູລະນາການ ໃນລະບົບການພັດທະນາທີ່ເປັນກ້ອນເອກະພາບ

1) ລະບົບການພັດທະນາຄົນ

1. ພຶດຕິກຳ
2. ຈິດໃຈ
3. ປັນຍາ

2) ລະບົບການພັດທະນາແບບຍືນຍົງ

1. ມະນຸດ
2. ສັງຄົມ
3. ທຳມະຊາດ
4. ເຕັກໂນໂລຊີ

ເອກະສານອ້າງອີງ ຄົ້ນຄວ້າ

# ການພັດທະນາແບບຍືນຍົງ

(Sustainable Development)

ປາຖະກະຖາ ຂອງ ພະທຳມະປິດົກ

(ປ.ອ. ປະຍຸດໂຕ)

24 / VII

ห้ามจำหน่าย

# ຄຳສະເໜີ ໃນການຈັດພິມພາກພາສາລາວ

ພະອາຈານ ຊາລີ ກັນຕະສີໂລ
ປະທານໂຄງການພຸດທະສາສະໜາເພື່ອການພັດທະນາ

ການຂາດເຂີນປຶ້ມອ່ານຕຳລາຮຽນ ຢູ່ໃນປະເທດພວກເຮົາເປັນພະຍາດຊຳເຮື້ອມາດົນ ນັບແຕ່ລະບົບການສຶກສາກ້າວອອກຈາກອານາເຂດຂອງສາສະນະຈັກ ພ້ອມໆກັບການຕົກເປັນ ອານານິຄົມຂອງຈັກກະພັດຕ່າງດ້າວ ມາແຕ່ຊຸມຕົ້ນປີ 1890 ມາຈົນຮອດການປະຕິວັດປົດປ່ອຍຊາດຢ່າງສົມບູນ ໃນປີ ຄ.ສ.1975 ໂດຍພັກປະຊາຊົນປະຕິວັດລາວ. ນັບແຕ່ນັ້ນມາ ທາງອົງການ ພຸດທະສາສະໜາສຳພັນແຫ່ງຊາດ(ອ.ພ.ສ)ໄດ້ມີສ່ວນປະກອບໃນການຈັດພິມປຶ້ມກ່ຽວກັບພະພຸດທະສາສະໜາ ອອກມາຕາມຄວາມສາມາດພາວະວິໄສແລະສັດທາຂອງພໍ່ແມ່ປະຊາຊົນລາວ ຮວມທັງພາກເອກະຊົນແລະອົງການຊ່ອຍເຫລືອສາກົນ ເພື່ອໃຫ້ເປັນຄູ່ມືສຶກສາຮ່ຳຮຽນແກ່ພະສົງສາມະເນນ ແລະພຸດທະສາສະນິກກະຊົນທົ່ວໄປ.

ໂຄງການພຸດທະສາສະໜາເພື່ອການພັດທະນາ(ຄ.ພ.ພ.) ເຊິ່ງເປັນໜ່ວຍງານໜຶ່ງທີ່ເຄື່ອນໄຫວພາຍໃຕ້ການຊີ້ນຳຂອງ ອ.ພ.ສ.ສູນກາງໄດ້ດຳເນີນໂຄງການຂອງຕົນຕາມແນວທາງນະໂຍບາຍຂອງພັກແລະລັດມາແຕ່ປີ 2003 ມາເຖິງບັດນີ້ ເຫັນໄດ້ເຖິງຄວາມຈຳເປັນໃນການຜະລິດ ກໍຄືການພັດທະນາປຶ້ມອ່ານຕຳລາຮຽນທາງພະພຸດທະສາສະໜາເປັນຢ່າງຍິ່ງ, ທັງນີ້ ເພື່ອຕອບສະໜອງຄວາມຕ້ອງການຂອງນັກບວດ ນັກເທດທີ່ຈະອອກຈາລິກເຜີຍແຜ່ພະທຳຄຳສອນຂອງພະພຸດທະອົງໃຫ້ມີເນື້ອໃນໃຈຄວາມເໝາະສົມ

ຖ່ວງທັນກັບສະພາບການຂອງສັງຄົມ ແລະເປັນປະໂຫຍດຕໍ່ສັງ ຄົມ. ດັ່ງນັ້ນ ໂຄງການພຸດທະສາສະໜາເພື່ອການພັດທະນາ(ຄ.ພ.ພ) ຈຶ່ງໄດ້ຈັດຕັ້ງກອງທຶນນ້ອຍໆໜຶ່ງຂຶ້ນ ເອີ້ນວ່າ "ກອງທຶນພັດທະນາຕຳລາ" ເພື່ອຂະຫຍາຍວຽກງານສ່ວນນີ້ ບໍ່ວ່າຈະເປັນປຶ້ມອ່ານ ຕຳລາຮຽນ ຈົດໝາຍຂ່າວ ...ທີ່ຈະໃຫ້ຄວາມຮູ້ ຂ່າວສານອັນຈຳເປັນກ່ຽວກັບ ການສຶກສາພະພຸດທະສາສະໜາ ແລະການພັດທະນາສັງຄົມ.

ຜ່ານມາທາງໂຄງການ ໄດ້ຮັບທຶນສະໜັບສະໜູນຈາກອົງການເສມສິກຂາໄລ, ອົງການຊ່ອຍເຫລືອສາກົນອື່ນໆ ເອກະຊົນ ບຸກຄົນ ບໍລິສັດໃນລາວ ຈັດພິມປຶ້ມແລະຈົດໝາຍຂ່າວຊາວພຸດມາເປັນລະຍະໜຶ່ງແລ້ວ.

ໃນປີນີ້ ທາງໂຄງການໄດ້ນຳເອົາ ທາງທ້າສາຍ ບົດເທດສະໜາຂອງ ພະອາຈານ ປານ ອານັນໂທ, ວັດມະຫາພຸດທະວົງສາ ປ່າຫລວງ ເມື່ອຄາວພະອາຈານເທດສັ່ງສອນລູກສິດ ແຕ່ປີ 1959 ເຊິ່ງປັດຈຸບັນເປັນປຶ້ມຫາຍາກແລ້ວນັ້ນ ຄືນມາຈັດພິມເຜີຍແຜ່ໃຫ້ເປັນທຳມະທານແກ່ ພຸດທະສາສະນິກກະຊົນທົ່ວໄປ ບັດນີ້ ພວກເຮົາມີຄວາມຍິນດີປີຕາຢ່າງຍິ່ງທີ່ໄດ້ຈັດພິມປຶ້ມ "ການພັດທະນາແບບຍືນຍົງ" ຂອງພະອາຈານພຣະພຣົມມະຄຸນາພອນ (ປ.ອ.ປະຍຸດໂຕ) ເຊິ່ງເປັນນັກຮາດທາງພຸດທະສາສະໜາຜູ້ສຳຄັນແຫ່ງຍຸກປັດຈຸບັນຢູ່ໃນປະເທດໄທ. ຜົນງານຂອງພະອາຈານເຫຼັ້ມນີ້ເປັນທີ່ແຜ່ຫລາຍໄດ້ຮັບການແປອອກເປັນພາສາຕ່າງປະເທດຫຼາຍພາສາ. ເນື້ອໃນໃຈຄວາມຂອງປຶ້ມ ຮຽບຮຽງອອກຈາກບົດເທດສະໜາ ຂອງທ່ານແຕ່ປີ 1993 ແຕ່ທ່ານໄດ້ປັບປຸງຮຽບຮຽງສືບຕໍ່ເລື້ອຍມາ, ສະບັບທີ່ນຳມາແປຮຽບຮຽງເປັນພາສາລາວ ແມ່ນສະບັບຈັດພິມ ຄັ້ງທີ 11 ອັນເປັນຄັ້ງຫຼ້າສຸດຂອງປີ 2008, ໄດ້ຮັບຮາງວັນຈາກ ມູນນິທິໂຕໂຍຕາແຫ່ງປະເທດໄທ (TOYOTA THAILAND FOUNDATION AWARD).

ບົດຮຽນທີ່ຈະໄດ້ ແມ່ນຄວາມຮັບຮູ້ເລິກເຊິ່ງຈະແຈ້ງ ຢ່າງຫຼວງຫຼາຍແລະລ້ວນແຕ່ສຳຄັນທັງນັ້ນ ແຕ່ສິ່ງປະເສີດຍິ່ງອັນໜຶ່ງຄົງຈະແມ່ນການນຳສະເໜີທາດແທ້ຂອງທັດສະນະຕໍ່ໂລກທຳມະຊາດສິ່ງແວດລ້ອມ ຕາມແນວທາງຂອງພຸດທະສາສະໜາທີ່ໃຫ້ຄຳຊີ້ແນະໃນພາກປະຕິບັດເພື່ອ ການພັດທະນາຄົນ ທີ່ຕ້ອງເປັນມິດກັບທຳມະຊາດ ນັບຖືທຳມະຊາດແລະຮຽນຮູ້ທີ່ຈະຢູ່ຢ່າງສັນຕິສຸກຮ່ວມກັບທຳມະຊາດ ກໍຄືເພື່ອນມະນຸດໃນໂລກ. ໂດຍທີ່ເນື້ອໃນໃຈຄວາມທັງຫຼາຍສອດຄ່ອງເປັນອັນດີ ກັບແນວທາງນະໂຍບາຍຂອງພັກ ລັດຂອງ ສ.ປ.ປ.ລາວ ທີ່ໄດ້ວາງນະໂຍບາຍສິ່ງແວດລ້ອມ ດັ່ງທີ່ "ໄດ້ກຳນົດໃນລັດຖະທຳມະນູນແຫ່ງຊາດ(1991) ມາດຕາ 17, ແລະໄດ້ວາງນະໂຍບາຍການແກ້ໄຂສິ່ງແວດລ້ອມຕິດພັນກັບການພັດທະນາເສດຖະກິດ ແລະສັງຄົມ ຫລື ການນຳໃຊ້ຫຼັກການພັດທະນາແບບຍືນຍົງ ແນ່ໃສ່ແກ້ໄຂຫຼຸດຜ່ອນຄວາມທຸກຍາກຂາດເຂີນ..." (ຄວາມຮູ້ພື້ນຖານກ່ຽວກັບສິ່ງແວດລ້ອມ, ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ, 2004, ໜ້າ 131,134) ປຶ້ມເຫລັ້ມນີ້ຈຶ່ງສົມທີ່ຈະເປັນຄູ່ມື ຢູ່ຄຽງກາຍນັກພັດທະນາສັງຄົມເປັນທີ່ສຸດ.

ໂດຍສະເພາະແລ້ວ ຜົນງານຂອງພຣະອາຈານເຫລັ້ມນີ້ ມີຂໍ້ມູນສາກົນ ແລະບັນນານຸກົມ ທີ່ໄຂປະຕູກວ້າງສູ່ໂລກແຫ່ງຂໍ້ມູນຂ່າວສານ, ເປັນແບບຢ່າງທີ່ຕ້ອງຮໍ່າຮຽນໃນການຊອກຫາຂໍ້ມູນ ການອ່ານ ແລະການຕີຄວາມໝາຍ ໆລໆ ທາງໂຄງການ ຮູ້ສຶກເປັນບຸນຄຸນຢ່າງລົ້ນເຫຼືອ ແລະມີຄວາມປິຕິເປັນຢ່າງຍິ່ງທີ່ໄດ້ມີສ່ວນຮ່ວມໃນການຈັດພິມອອກເປັນພາສາລາວໃນຄັ້ງນີ້ ເພາະຈະເປັນສິ່ງກະຕຸ້ນເຕືອນໃຫ້ພຸດທະສາສະນິກກະຊົນລາວຢາກເຝິກຝົນຮໍ່າຮຽນ ແລະຄົ້ນຄວ້າຕາມແນວທາງທີ່ພຣະອາຈານ ໄດ້ສະແດງໄວ້ເປັນຕົວຢ່າງ.

ໃນຕໍ່ໜ້າທາງໂຄງການຍັງຈະສືບຕໍ່ຊອກຫາປຶ້ມອ່ານຕຳລາທີ່ຫາຍາກແລ້ວຄືນມາຈັດພິມອີກເຊັ່ນ ໂຫຣາສາດລາວ ຂອງເຈົ້າ

ເຜັດຊະธาດ ແລະມະຫາສິລາວິຣະວົງສ໌, ຄຳກອນທົດສະຊາດຊາດົກແລະຕຳລາກ່ຽວກັບພຣະທຳມະວິໄນຕ່າງໆ ໄວ້ໃຫ້ເປັນປັນຍາທານແກ່ສາທຸຊົນທັງຫຼາຍຕໍ່ໄປ. ທ່ານຜູ້ໃດມີຈິດສັດທາ ໂມທະນາໃສ່ກອງທຶນດັ່ງກ່າວ ກໍຂໍໄດ້ກະລຸນາຕິດຕໍ່ຫ້ອງການຂອງ ຄ.ພ.ພ ໄດ້ຕາມທີ່ຢູ່ໃນປຶ້ມນີ້.

ສຸດທ້າຍນີ້ ອາຕະມາ ພ້ອມດ້ວຍຄະນະໂຄງການ ຂໍອວຍພອນໄຊອັນປະເສີດທີ່ສະຖິດຢູ່ໃນສາກົນຈັກກະວານນີ້ຍັງ ພະອາຈານພະພຣົມ ຄຸນາພອນ, ຂອບໃຈຢ່າງລົ້ນເຫລືອ ຕໍ່ອົງການ ເສມສິກຂາໄລປະເທດໄທ ຕະຫລອດທັງທຸກໆທ່ານທີ່ໄດ້ມີສ່ວນຮ່ວມໃນການຈັດພິມປຶ້ມຫົວນີ້ອອກມາດ້ວຍ.

*ທີ່ວັດປ່ານາຄູນ ເມືອງນາຊາຍທອງ*
*ຕຸລາ 2008*
*ພະອາຈານ ຊາລີ ກັນຕະສີໂລ*

ພາກ 1

# ທາງຕັນ ຂອງການພັດທະນາ ແບບບໍ່ຍືນຍົງ

# ເມື່ອໂລກຕັ້ງແຮກມີການພັດທະນາ

ການພັດທະນາແບບຍືນຍົງເປັນແບບໃດ ຄົນຈຳນວນຫຼາຍຍັງບໍ່ເຂົ້າໃຈເທົ່າໃດ ດັ່ງນັ້ນ ພໍເວົ້າຂຶ້ນມາ ຜູ້ຟັງກໍອາດຈະເດົາຄວາມໝາຍໄປຕ່າງໆນາໆ

ແລ້ວກໍອາດເດົາບໍ່ຄືກັນ ແຕ່ຢ່າເດົາດີກວ່າ ເປັນຫຍັງຈຶ່ງວ່າຢ່າເດົາດີກວ່າ ເພາະເດົາໄປກໍບໍ່ມີປະໂຫຍດ ເພິ່ນມີຄວາມໝາຍຂອງເພິ່ນຢູ່ແລ້ວຄືຄຳວ່າການພັດທະນາແບບຍືນຍົງນີ້ເປັນຄຳແປມາຈາກພາສາອັງກິດທີ່ວ່າ Sustainable Development ໃນເມື່ອເປັນຄຳທີ່ແປມາຈາກພາສາອັງກິດ ແທນທີ່ເຮົາຈະມາ ເດົາຄວາມໝາຍກັນໃຫ້ເສຍເວລາ ເຮົາກໍຕ້ອງໄປເບິ່ງກ່ອນວ່າ ຂອງເກົ່າເພິ່ນວ່າແບບໃດເຮົາຈຶ່ງຕ້ອງຍອມເສຍເວລາ ທີ່ຈະໄປເວົ້າເລື່ອງການພັດທະນາແບບຍືນຍົງ ໃນຄວາມໝາຍຂອງພວກຕາເວັນຕົກ ຜູ້ເຈົ້າຂອງຄວາມຄິດໃນເລື່ອງນີ້ ແລະຕ້ອງຕັ້ງເປັນຂໍ້ສັງເກດວ່າ ທີ່ນຳມາເປັນຫົວຂໍ້ ສຳລັບປາຖະກະຖານັ້ນ ກໍເຂົ້າກັບຍຸກສະໄໝ ເພາະເວລານີ້ ຄຳວ່າການພັດທະນາແບບຍືນຍົງຫຼື Sustainable Development ນັ້ນກຳລັງເປັນທີ່ນິຍົມເວົ້າຕິດສົບຕິດປາກກັນຫຼາຍ ບໍ່ສະເພາະແຕ່ໃນປະເທດເຮົາເທົ່ານັ້ນແຕ່ເປັນຄຳນິຍົມເວົ້າກັນໄປທົ່ວໂລກ.

ຄວາມຈິງແລ້ວ ອາດຈະບໍ່ເວົ້າວ່າ "ບໍ່ນິຍົມແຕ່ໃນສະເພາະປະເທດໄທເທົ່ານັ້ນແຕ່ນິຍົມໄປທົ່ວໂລກ" ແຕ່ຄວນຈະເວົ້າໃນທາງປີ້ນກັນວ່າ "ເພາະທົ່ວໂລກນິຍົມເວົ້າກັນ ຄົນໄທກໍເລີຍນິຍົມໄປນຳ" ຄືເຮັດນຳໂລກຕາເວັນຕົກທີ່ເພິ່ນເວົ້າກັນຫຼາຍ ປຶ້ມຕຳລາທັງຫຼາຍດຽວນີ້

ໄປໃສກໍມີແຕ່ Sustainable Development ຍັງບໍ່ເທົ່ານັ້ນຍັງເອົາໄປໃຊ້ນຳໜ້າຄຳອື່ນໆອີກ ເຊັ່ນ Sustainable society, sustainable future, sustain-able economy, sustainable agriculture ອີ່ຫຍັງຕໍ່ຫຍັງຫຼາຍແນວ ເບິ່ງວ່າ sustainable ຈະເປັນຄຳເທື່ອນຊອນກັນຫຼາຍເກີນຂອບເຂດໃນປັດຈຸບັນ ດັ່ງນັ້ນ ພວກເຮົາຄວນຈະຮູ້ແລະເຂົ້າໃຈຄວາມເປັນມາຂອງມັນເສຽກ່ອນ.

ທຳອິດເມື່ອມີການພັດທະນາແບບຍືນຍົງ ມັນກໍພາໃຫ້ຄຶດສົງໄສວ່າ ຄົງຈະມີການພັດທະນາແບບບໍ່ຍືນຍົງມາແລ້ວ ແລະມັນກໍເປັນແທ້ໆ. ການທີ່ເພິ່ນຕັ້ງຊື່ການພັດທະນາແບບຍືນຍົງຂຶ້ນມາ ກໍເພາະວ່າໂລກນີ້ພົບພໍ້ກັບບັນຫາການພັດທະນາທີ່ເພິ່ນເອີ້ນກັນວ່າ ບໍ່ຍືນຍົງມາແລ້ວ ຈຶ່ງໄດ້ມາຄຶດຄົ້ນຫາແບບແຜນການພັດທະນາ ຫຼືວິທີການພັດທະນາແບບຍືນຍົງຂຶ້ນມາ. ໝາຍຄວາມວ່າໂລກຂອງເຮົານີ້ ໄດ້ພົບພໍ້ບັນຫາກັບການພັດທະນາທີ່ເປັນການພັດທະນາແບບບໍ່ຍືນຍົງມາເປັນເວລາດົນນານແລ້ວ ກໍຫາທາງແກ້ບັນຫາການພັດທະນາແບບບໍ່ຍືນຍົງນັ້ນ ຈົນຄຶດອອກໄດ້ວິທີການພັດທະນາຂຶ້ນໃໝ່ທີ່ເອີ້ນວ່າ sustain-able development ຫຼື ການພັດທະນາແບບຍືນຍົງນີ້ຂຶ້ນມາ.

ການພັດທະນາແບບຍືນຍົງນີ້ເກີດຂຶ້ນແບບໃດ ຈະຂໍທົບທວນເລົ່າຄວາມເປັນມາໃນໂລກນີ້ສາກ່ອນ ເພື່ອຄວາມເຂົ້າໃຈຮ່ວມກັນໃຫ້ເຫັນວ່າ ມີເລື່ອງເປັນມາແບບໃດ ແລະເພິ່ນເຂົ້າໃຈຄວາມໝາຍກັນແບບໃດ ຄົນຜູ້ອາວຸໂສຮຸ່ນເກົ່າໆແດ່ຄົງຈື່ໄດ້ວ່າ ເມື່ອດົນມາແລ້ວ ພາຍຫ້າສິບປີຂຶ້ນໄປ ໄດ້ເກີດສົງຄາມໂລກເທື່ອທີ 2 ເຊິ່ງມີຜົນສະທ້ອນໄປໃນທົ່ວໂລກ ເຮັດໃຫ້ທຸກໆປະເທດຕ້ອງຕື່ນໂຕຂຶ້ນມາ ເພາະສ່ວນໃຫຍ່ກໍໄດ້ຮັບຄວາມເສຽຫາຍ ເຈັບແສບຈາກສົງຄາມນັ້ນ. ເມື່ອສົງຄາມໂລກສ້ຽງສຸດລົງ ປະເທດຕ່າງໆກໍເຄື່ອນໄຫວຕິດຕໍ່ກັນ ຫາທາງແກ້ບັນຫາຂອງໂລກ ແລະໄດ້ມີການຕັ້ງອົງການໂລກຂຶ້ນມາ ທີ່ຮູ້ຈັກກັນດີກໍແມ່ນອົງການສະຫະປະຊາຊາດ ເຊິ່ງແຕ່ກ່ອນນິຍົມເອີ້ນກັນວ່າ ຢູໂນ (UNO)

ມາຮອດດຽວນີ້ ເອີ້ນຖືກຕ້ອງຂຶ້ນ ວ່າ ຢູເອນ (UN) ເຊິ່ງສ້າງຕັ້ງຂຶ້ນ ໃນຕອນທ້າຍປີ ຄ.ສ 1945 ດັ່ງທີ່ມີ ການສະຫຼອງວັນສະຫະປະຊາຊາດ ກັນໃນວັນທີ 24 ຕຸລາທຸກໆປີ.

ໃນການຕັ້ງອົງການສະຫະປະຊາຊາດຂຶ້ນມານີ້ ກໍມີຄວາມມຸ່ງ ໝາຍວ່າ ຈະໃຫ້ທົ່ວໂລກມີການຕິດ ຕໍ່ສຳພັນກັນໃນທາງທີ່ດີງາມ ຈຶ່ງ ຈະເກີດມີສັນຕິພາບບໍ່ຕ້ອງມີເສິກສົງຄາມໃໝ່ອີກ ເພາະສົງຄາມໂລກ ເທື່ອທີສອງນັ້ນ ເຮັດໃຫ້ມະນຸດທັງຫຼາຍປະສົບຄວາມທຸກຍາກລຳບາກ ເດືອດຮ້ອນຫຼາຍ, ປະເທດຕ່າງໆ ທີ່ຜ່ານສົງຄາມໂລກມາຕ່າງ ກໍໄດ້ ຮັບບົດຮຽນເຈັບແສບ ຄືດັ່ງເວົ້າມາຕອນທຳອິດນັ້ນແລ້ວ ລາງປະເທດ ທີ່ຖືກໄພສົງຄາມໂດຍກົງ ກໍພັງທະລາຍແລະເສຽຫາຍຢ່າງໜັກໜ່ວງ ສ່ວນປະເທດອີກພວກໜຶ່ງ ເຖິງວ່າຈະບໍ່ຖືກໄພມາເຖິງໂຕໂດຍກົງ ແຕ່ກໍ ໄດ້ຮັບຄວາມກະທົບກະເທືອນທີ່ແຜ່ກວ້າງທົ່ວໄປເຮັດໃຫ້ມີ ຄວາມຕື່ນ ໂຕໄປທົ່ວ.

ຫຼາຍປະເທດເຊິ່ງໃນແຕ່ກ່ອນເປັນຫົວເມືອງຂຶ້ນ ຫຼືທີ່ເອີ້ນກັນ ວ່າ ປະເທດອານານິຄົມ ມາຮອດລະຍະສ້ຽງສຸດສົງຄາມໂລກເທື່ອທີ ສອງແລ້ວ ໄດ້ມີຄວາມຕື່ນໂຕໃນເລື່ອງການດີ້ນຮົນຕໍ່ສູ້ເພື່ອກອບກູ້ເອ ກະລາດ ເຮັດໃຫ້ເກີດມີປະເທດເອກະລາດໃໝ່ໆຂຶ້ນມາ ປະເທດທີ່ເຄີຍ ເປັນອານານິຄົມ ກໍໄດ້ເປັນປະເທດເອກະລາດກັນຫຼາຍ.

ເມື່ອເວົ້າໂດຍຣວມແລ້ວ ບໍ່ວ່າປະເທດທີ່ຖືກໄພສົງຄາມ ກໍດີ ປະເທດທີ່ຕື່ນໂຕກໍດີ ທຸກປະເທດເຫຼົ່ານັ້ນ ກໍຢູ່ໃນສະພາບທີ່ຕ້ອງການ ຟື້ນຟູໃຫ້ມີການສ້າງສາຄວາມຈະເລີນກັນຂຶ້ນ. ແຕ່ການທີ່ຈະຟື້ນຟູປະ ເທດໃຫ້ມີຄວາມຈະເລີນ ມີຄວາມສຸກຂຶ້ນມາໄດ້ ກໍຈະຕ້ອງອາໄສການ ເງິນ ເປັນເລື່ອງສຳຄັນ, ສະຫະປະຊາຊາດ ຈຶ່ງຈັດຕັ້ງໜ່ວຍງານສຳຄັນ ຂຶ້ນມາ ເປັນອົງການໂລກສຳລັບຊ່ອຍເຫຼືອເລື່ອງການເງິນແກ່ປະ ເທດຕ່າງໆ ເອີ້ນກັນວ່າ ທະນາຄານໂລກ(1)World Bank ມີຊື່ທາງ

ການເປັນພາສາອັງ ກິດວ່າ International Bank for Reconstruction and Development (IBRD) ເຊິ່ງຄົນທົ່ວໄປໃນປະເທດເຮົາ ເອີ້ນວ່າ "ທະນາຄານສາກົນ ເພື່ອການບູລະນະແລະການພັດທະນາ" ກໍ່ຕັ້ງຂຶ້ນ ໃນປີ ຄ.ສ.1944 ແລະ ປະກາດເປັນທາງການໃນ ວັນທີ 27 ທັນວາ ຄ.ສ. 1945, ປີດຽວກັບປີທີ່ ຕັ້ງອົງການສະຫະປະຊາຊາດນັ້ນເອງ.

ການທີ່ເພິ່ນແຍກອອກເປັນສອງຄຳວ່າ reconstruction ຄື ການບູລະນະ ຫຼືປະຕິສັງຂອນ ຄຳໜຶ່ງ ແລະ development ຄືການ ພັດທະນາຄຳໜຶ່ງນັ້ນ ກໍຍ້ອນວ່າຢາກເນັ້ນເຖິງ ສະພາບຂອງບັນດາ ປະເທດທີ່ແບ່ງອອກເປັນສອງຝ່າຍ ຄືບັນດາປະເທດທີ່ສູນເສຽໜັກ ຍ້ອນການເຂົ້າຮ່ວມສົງຄາມເອງ ໄດ້ຮັບໄພພິບັດຈາກສົງຄາມຫຼາຍ ພວກນີ້ມີສະພາບທີ່ເຂົ້າກັບຄຳວ່າ ຟື້ນຟູບູລະນະ ຫຼື ປະຕິສັງຂອນ ສ່ວນອີກພວກໜຶ່ງ ເປັນປະເທດຫຼ້າຫຼັງ ເຖິງວ່າຈະບໍ່ໄດ້ຮັບຄວາມ ເສຽຫາຍຫຼາຍຈາກສົງຄາມໂດຍກົງ ກໍບໍ່ມີຄວາມຈະເລີນຢູ່ແລ້ວ ໂດຍ ສະເພາະປະເທດພວກນີ້ ສ່ວນໃຫຍ່ເປັນທົວເມືອງຂຶ້ນ ຫຼື ອານານິຄົມ ມາແຕ່ເກົ່າ ຄືດັ່ງເວົ້າໄວ້ແລ້ວ ພວກນີ້ມີສະພາບເຂົ້າກັບຄຳທີສອງ ຄື ຄຳວ່າ ພັດທະນາ.

ນີ້ເປັນເລື່ອງການກໍ່ຕັ້ງອົງການໂລກຂຶ້ນມາ ເພື່ອຊ່ອຍເຫຼືອ ແລະຈາກເຫດການນີ້ ເຮົາກໍໄດ້ເຫັນວ່າ ການພັດທະນາເກີດຂຶ້ນແລະ ແມ່ນໃນເວລານັ້ນແຫຼະ ທີ່ມີການຈັດແບ່ງປະເທດຕ່າງໆອອກໄປຕາມ ສະພາບ ມີການເອີ້ນປະເທດທີ່ມີສະພາບຫຼ້າຫຼັງ ຍັງບໍ່ຈະເລີນ ທັ້ນວ່າ underdeveloped countries ແປວ່າ ປະເທດດ້ອຍພັດທະນາ ຖືວ່າ ເປັນຄຳສັບທີ່ເກີດຂຶ້ນໃນລະຍະ ຄ.ສ. 1945 ສະໄໝນັ້ນ ນິຍົມໃຊ້ຄຳນີ້ ທີ່ແປວ່າ ດ້ອຍພັດທະນາ.

ເມື່ອມີປະເທດດ້ອຍພັດທະນາແລ້ວ ກໍຕ້ອງມີປະເທດທີ່ພັດ ທະນາແລ້ວ ຫຼືປະເທດທີ່ຈະເລີນແລ້ວ ເຊິ່ງເພິ່ນເອີ້ນວ່າ developed

247VIII
ຫ້າມຈຳໜ່າຍ

countries ແຕ່ປະເທດທີ່ developed ຄື ພັດທະນາແລ້ວນີ້ ລາງບ່ອນ ເພິ່ນກໍເອີ້ນວ່າ industrial countries/, industrialized countries ແດ່ ຄືເປັນປະເທດທີ່ມີອຸດສາຫະກຳ ຂະຫຍາຍໂຕຫຼາຍນັ້ນເອງ.

ຢ່າງໃດກໍດີ ປະເທດທີ່ເອີ້ນວ່າ ດ້ອຍພັດທະນານີ້ ລາງເທື່ອເມື່ອເພິ່ນຢາກເວົ້າໃຫ້ສຸພາບແດ່ ກໍເອີ້ນວ່າ less-developed countries ຄືປະເທດທີ່ພັດທະນາໜ້ອຍແດ່ ແລ້ວຕໍ່ມາກໍມີຄຳອື່ນໆອີກມາໃຊ້ແທນຫຼາຍຂຶ້ນ ຈົນສຸດທ້າຍກໍຄ່ອຍໆນິຍົມເອີ້ນວ່າ developing countries ປະເທດກຳລັງພັດທະນາ ແຕ່ໂດຍທົ່ວໄປໃນລະຍະປີ 1967-68 ເອກະສານສ່ວນຫຼາຍຍັງເອີ້ນວ່າ underdeveloped countries ປະເທດດ້ອຍພັດທະນາ" ຢູ່ ຈະມີຄຳວ່າ "ກຳລັງພັດທະນາ" ແຊກປົນ ກໍແຕ່ເລັກນ້ອຍ ຫຼັງຈາກນັ້ນແລ້ວ ຄຳວ່າປະເທດກຳລັງພັດທະນານີ້ developing countries ກໍໃຊ້ກັນຫຼາຍຂຶ້ນໆຈົນມາຮອດປັດຈຸບັນ ເວົ້າໄດ້ວ່າປະເທດດ້ອຍ ພັດທະນານີ້ເກືອບບໍ່ໃຊ້ກັນເລີຍ ອາດຈະມີແດ່ກໍແມ່ນຄຳ less-developed countries ໂຮມຄວາມແລ້ວກໍແມ່ນໃຊ້ສັບປົນກັນຢູ່ແດ່.

ຕໍ່ມາກໍມີຄຳສັບໃໝ່ເກີດຂຶ້ນອີກຄືຄຳວ່າ "ໂລກທີສາມ" ດ້ວຍວ່າມີການແບ່ງໂລກເປັນໂລກທີ 1 ຄືບັນດາປະເທດອຸດສາຫະກຳ ທີ່ມີສະຫະລັດອາເມລິກາອອກໜ້າ ໂລກທີສອງແມ່ນບັນດາປະເທດໃນຄ້າຍສັງຄົມ ນິຍົມ-ຄອມມູຍນິດ ທີ່ມີອະດີດສະຫະພາບໂຊວຽດຣັດເຊຍເປັນຫົວໜ້າ ເຊິ່ງບັດນີ້ຫຼົ້ມຈົມໄປແລ້ວ ສ່ວນໂລກທີ 3 ກໍແມ່ນບັນດາປະເທດທີ່ກຳລັງພັດທະນານີ້ເອງ.

ທັງໝົດນີ້ ແມ່ນຄວາມເປັນມາໃນເມື່ອກ່ອນ ເຊິ່ງເປັນເລື່ອງກ່ຽວຂ້ອງກັບການພັດທະນາອີງການໂລກທີ່ເປັນສ່ວນໜຶ່ງຂອງທະນາຄານໂລກນີ້ ໄດ້ໃຫ້ທຶນແກ່ປະເທດຕ່າງໆ ໂດຍການໃຫ້ກູ້ຢືມເງິນ ໄປໃຊ້ໃນການພັດທະນາປະເທດ ເຮັດໃຫ້ປະເທດຊາດຈະເລີນຮຸ່ງເຮືອງຂຶ້ນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ